# ແມ່ຍິງທະນາຄານສະແດງຄວາມຮູ້ບຸນຄຸນຕໍ່ກອງທັບ



ໃນຕອນແລງຂອງວັນທີ 18 ມັງກອນ ຜ່ານມານີ້, ຄະນະສະຫະພັນແມ່ຍິງທະນາຄານແຫ່ງ ສ ປປ ລາວ ເຊິ່ງນຳໂດຍທ່ານ ນາງ ວັດທະນາ ດາລາລອຍ ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ປະທານສະຫະພັນແມ່ຍິງທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍບັນດາຄະນະສະຫະພັນແມ່ຍິງຮາກຖານທະນາຄານ ໄດ້ຮ່ວມກັນເຂົ້າສະແດງຄວາມຮູ້ບຸນຄຸນຕໍ່ກັບນາຍ ແລະ ພົນທະຫານສັງກັດຢູ່ກອງທັບປະຊາຊົນລາວ ໂດຍສະເພາະໄດ້ເຂົ້າອວຍພອນຄະນະນຳສະຫະພັນແມ່ຍິງກະຊວງປ້ອງກັນປະເທດທີ່ສຳນັກງານກະຊວງດັ່ງກ່າວ.

ທ່ານ ນາງ ວັດທະນາ ດາລາລອຍ ໄດ້ຕາງໜ້າໃຫ້ເອື້ອຍນ້ອງແມ່ຍິງທົ່ວລະບົບທະນາຄານໄດ້ນຳເອົານ້ຳໃຈໄມຕີຈິດມິດຕະພາບ-ນຳເອົາຄວາມຮູ້ບຸນຄຸນມາຍັງນາຍ ແລະ ພົນທະຫານກອງທັບປະຊາຊົນລາວ, ວິລະຊົນຜູ້ທີ່ໄດ້ຜ່ານຜ່າເສັ້ນທາງອັນດຸເດືອດຊັ່ງອຂາດຍາວນານແຕ່ເຕັມໄປດ້ວຍໄຊຊະນະ ແລະ ໂດຍຜ່ານການຊີ້ນຳ-ນຳພາເດັດຂາດ, ໂດຍກົງ ແລະ ຮອບດ້ານຂອງພັກທີ່ມີກຽດສະຫງ່າ ແລະ ສາມາດຍາດໄດ້ຜົນສຳເລັດອັນໃຫຍ່ໃນຫຼາຍດ້ານ, ປະກອບສ່ວນອັນສົມກຽດເຂົ້າໃນການປະຕິ

ວັດປະຊາທິປະໄຕ ແລະ ພາຍໃຕ້ການປະຕິບັດ 2 ໜ້າທີ່ຍຸດທະສາດ ແລະ ພາລະກິດປ່ຽນແປງໃໝ່ ກອງທັບຍິ່ງໄດ້ແບກຫາບພາລະອັນໃຫຍ່ຫຼວງ ແລະ ກໍສາມາດເຮັດສຳເລັດໜ້າທີ່ການເມືອງຂອງຕົນ ເປັນຢ່າງດີ.

ໃນໂອກາດສະຫງ່າລາສີນີ້, ທ່ານປະທານສະຫະພັນແມ່ຍິງທະນາຄານແຫ່ງ ສປປ ລາວ ກໍໄດ້ ນຳເອົາດອກໄມ້ສົດພ້ອມດ້ວຍເຂົ້າປາ-ອາຫານແຫ້ງເພື່ອຝາກເຖິງອ້າຍນ້ອງທີ່ເຮັດໜ້າທີ່ປ້ອງກັນຄວາມ ສະຫງົບສຸກຢູ່ເຂດຫ່າງໄກຊອກຫຼີກ, ເຂດທຸລະກັນດານ-ເຂດພູຜາສູງຊັນ ແລະ ເຂດຊາຍແດນ ເຊິ່ງ ຂອງຂັວນເຫຼົ່ານີ້ມີມູນຄ່າ 10 ລ້ານກວ່າກີບ ເຊິ່ງກ່າວຮັບໂດຍທ່ານ ພັນເອກ ດຣ ນາງ ແວ່ນແກ້ວ ອຸ ທະວົງ ຫົວໜ້າຫ້ອງການສະຫະແມ່ຍິງກອງທັບ

ຈາກນັ້ນ, ທັງສອງຝ່າຍກໍ່ໄດ້ທັກທາຍປາໄສ ແລະ ໂອລົມກັນດ້ວຍບັນຍາກາດແຫ່ງຄວາມສາມັກ ຄີຮັກແພງ ແລະ ທັງສອງຝ່າຍໄດ້ຕັດສິນໃຈສືບຕໍ່ຢືນຄຽງບ່າຄຽງໄລ່ ແລະ ພ້ອມກັນຈັດຕັ້ງຜັນຂະ ຫຍາຍມະຕິ IX ຂອງພັກໃຫ້ປະກົດຜົນເປັນຈິງ.